# ແມ່ນຫຍັງເກີດຂຶ້ນກັບຄົນດີແລະຄົນຜິດ?

### ສິ່ງທີ່ເກີດຂຶ້ນກັບຄົນດີແລະຄົນຜິດແຕກຕ່າງກັນແທ້ບໍ?

ບາງຄົນເວົ້າວ່າ, "ຈຸດດີຂອງອາດຊະຍາກຳກໍຄືມັນເກີດຂຶ້ນກັບຄົນອື່ນ ມັນບໍ່ໄດ້ເກີດຂຶ້ນກັບຂ້ອຍ." ແນວໃດກໍຕາມສະຖິຕິຂອງຄົນຕາຍຍ້ອນອາດຊະຍາກຳສູງຂຶ້ນທຸກມື້ ແລະຈັກມື້ຄົນທີ່ເຮົາເວົ້າວ່າ ແມ່ນ "ຄົນອື່ນ" ອາດແມ່ນໂຕພີ່ນ້ອງຫລືຂ້າພະເຈົ້າກໍອາດເປັນໄດ້.

ບໍ່ມີໃຜມັກອາດຊະຍາກຳ ແຕ່ວ່າມັນກໍຢູ່ເໜືອສຸດວິໄສຂອງເຮົາທີ່ຈະຄວບຄຸມໄດ້! ພວກເຮົາເຮັດເປັນບໍ່ສົນໃຈຕໍ່ອາດຊະຍາກຳບໍ່ໄດ້ ຄວາມຄິດທີ່ວ່າອາດຊະຍາກຳບໍ່ມີວັນເກີດຂຶ້ນກັບພີ່ນ້ອງດອກ ຂ້າພະເຈົ້າກໍບໍ່ຢາກໃຫ້ພີ່ນ້ອງຄິດແບບນີ້ ເພາະວ່າສິ່ງນີ້ມັນບໍ່ເຂົ້າໃຜອອກໃຜ ອາດຊະຍາກຳ ການທຸບຕີກັນ ແລະການຂ້າຟັນລັນແທງກັນມີຢູ່ທຸກບ່ອນ. ບໍ່ຢາກໃຫ້ພີ່ນ້ອງຄິດວ່າມີແຕ່ພວກນັກເລງອັນທະພານຫລືສະມາຊິກພວກກໍ່ການຮ້າຍເທົ່ານັ້ນທີ່ກໍ່ເຫດການອາດຊະຍາກຳ. ມີຫລາຍໆເທື່ອທີ່ນັກຮຽນເອົາປືນເອົາລະເບີດເຂົ້າໄປໃນໂຮງຮຽນແລ້ວກໍເຫດການຮ້າຍ ຂ້າຄູອາຈານຂ້າເພື່ອນນັກ-ຮຽນດ້ວຍກັນ. ຕາມໜັງສືພິມແລະຕາມສື່ລາຍງານຕ່າງໆເຂົາໄດ້ລາຍການງານວ່າ ການຂ້າກັນ ການລອບສັງຫານ ການປຸ້ນຈີ້ ຜູ້ກໍ່ການຮ້າຍລອບວາງລະເບີດ ການຂົ່ມຂືນ ການສໍ້ລາດບັງຫລວງ ແລະການສໍ້ໂກງຕ່າງໆແມ່ນມີໃຫ້ເຫັນເປັນປະຈຳ

ກົດໝາຍໄປຢູ່ໃສໝົດ? ສິນທຳໄປໃສໝົດແລ້ວ? ມີຫຍັງມາປ່ຽນແປງໂລກນີ້?

ລູກຫລານທີ່ຫາກເກີດຂຶ້ນມາໃໝ່ມັກເປັນຄົນລອກລຽນແບບ ແລ້ວແມ່ນໃຜລ່ະທີ່ຈະເປັນຕົວຢ່າງທາງດ້ານສິນລະທຳ,ຈາລິຍະທຳແລະທາງດ້ານຝ່າຍຈິດວິນຍານໃຫ້ແກ່ເຂົາ? ພໍ່ມັກໂກງພາສີ, ແມ່ມັກເຮັດແທ້ງ ພໍ່ແລະແມ່ມັກນອກໃຈກັນແລະລູກໆກໍເຫັນສິ່ງເຫລົ່ານີ້ ພໍ່ແມ່ຢ່າງຮ້າງກັນເຮັດໃຫ້ຫົວໃຈຜູ້ເປັນລູກຕ້ອງມີບາດແຜ! ຖ້າພໍ່ແມ່ບໍ່ສາມາດປູກຝັງຈິດສຳນຶກວ່າສິ່ງໃດຖືກສິ່ງໃດຜິດໃຫ້ກັບລູກແລ້ວແມ່ນໃຜລ່ະຈະມາສອນເຂົາເຖິງສິ່ງນີ້? ພໍ່ແມ່ບໍ່ສາມາດມອບໃຫ້ທີ່ອັນໃຫຍ່ຫລວງນີ້ໄວ້ກັບທາງໂຮງຮຽນແຕ່ຝ່າຍດຽວ. ເພາະໂຮງຮຽນຫລາຍແຫ່ງບໍ່ໄດ້ສອນສິນລະທຳຊີວິດ ໂດຍທົ່ວໄປແລ້ວເບິ່ງຄືວ່າພວກເຮົາມີຊີວິດຢູ່ນອກມາດຕະຖານສິນລະທຳຂອງພະຄຳພີ!

ທຸກມື້ນີ້ບາງໂບດກໍໄດ້ສອນວ່າ ມາດຕະຖານຂອງພະເຈົ້າກ່ຽວກັບຄວາມດີຄວາມຊົ່ວໃຊ້ບໍ່ໄດ້ອີກແລ້ວ. ພວກເຂົາເວົ້າວ່າພະບັນຍັດຂອງພະອົງໄດ້ຖືກລົ້ມເລີກໄປແລ້ວ ແລະມັນກໍເປັນໄປບໍ່ໄດ້ດອກທີ່ຈະຮັກສາພະບັນຍັດເຫລົ່ານັ້ນ. ແລະມັນເລີຍເຮັດໃຫ້ເຂົາເຮັດຕາມໃຈປາດຖະໜາຂອງເຂົາ.

ສິ່ງໃດທີ່ພວກເຂົາຢາກເຮັດພວກເຂົາເຮັດ ເລີຍເຮັດຫ້ອງທະໜົນເຕັມໄປດ້ວຍອຸບັດຕິເຫດລົດຍົນ ເຮັດໃຫ້ຄອບຄົວແຕກແຍກກັນ ເຮັດໃຫ້ລູກໆກາຍເປັນຄົນບໍ່ຟັງຄວາມ ແລະເຮັດໃຫ້ສັງຄົມເຕັມໄປດ້ວຍອາດຊະຍາກຳ.

ຜູ້ພະຍາອການໂຮເຊອາໄດ້ກ່າວວ່າ, (ໂຮເຊອາ 8:7) "ເມື່ອພວກເຂົາຫວ່ານລົມ ພວກເຂົາກໍເກັບກ່ຽວລົມພະຍຸ ..." ແຕ່ວ່າຄຳຖາມກໍຄື: ມີໃຜແນ່ທີ່ສາມາດບອກໄດ້ວ່າອັນໃດຖືກອັນໃດຜິດ? ແລ້ວຈະຮູ້ໄດ້ແນວໃດວ່າໃຜເປັນຄົນດີແລະວ່າໃຜເປັນຄົນຊົ່ວ? ຖ້າຫາກວ່າບໍ່ມີມາດຕະຖານວັດວ່າອັນໃດຖືກອັນໃດຜິດ ມັນກໍເທົ່າກັບວ່າທຸກການກະທຳຂອງເຮົາລ້ວນແລ້ວແຕ່ເປັນການກະທຳທີ່ຖືກ-ຕ້ອງ.

ພະຄຳພີໄດ້ບອກວ່າພວກເຮົາບໍ່ສາມາດບອກໄດ້ວ່າອັນໃດຖືກອັນໃດຜິດ: (ສຸພາສິດ 16:25) "ມີທາງນຶ່ງຊຶ່ງຄົນເຮົາຄິດວ່າຖືກ ແຕ່ມັນສິ້ນສຸດລົງທີ່ທາງຂອງຄວາມມໍຣະນາ" ອັກຄະສາວົກໂປໂລໄດ້ພະຍາກອນໄວ້ວ່າ: (2 ຕີໂມທຽວ 4:3,4) "ເພາະຈະມີເວລານຶ່ງທີ່ເຂົາຈະບໍ່ທົນຮັບເອົາຄຳສອນອັນມີຫລັກ ແຕ່ຕາມຄວາມປາຖນາຂອງເຂົານັ້ນ ເຂົາຈະຮວບຮວມຄຣູໄວ້ສຳລັບເຂົາເອງ ເພື່ອບັນ-ເທົາຫູຄັນຂອງເຂົາ ເຂົາຈະອວ່າຍຫູຫນີຈາກຄວາມທ່ຽງທັມ ຕ່າວໄປຟັງນິຍາຍຕ່າງໆ"

ມັນແມ່ນເລື່ອງເສົ້າທີ່ຈະກ່າວວ່າໂດຍການບໍ່ປະຕິບັດຕາມກົດມາຍນັ້ນບໍ່ໄດ້ເຮັດໃຫ້ເຮົາເປັນອິດສະ-ຫລະແຕ່ຢ່າງໃດ! ຖ້າເຮົາລົບມາດຕະຖານແຫ່ງຄວາມຜິດຄວາມຖືກອອກ ປັນຫາຄວາມຫຍຸ້ງຍາກຕ່າງໆກໍຈະຕາມມາ ຖ້າຫາກບໍ່ມີປ້າຍສັນຍານຈະລາຈອນຕ່າງໆຕາມທ້ອງຖະໜົນ, ລົດກໍຄົງເດີນ-ທາງລຳບານແລະອຸບັດຕິເຫດກໍຄົງເກີດຂຶ້ນເປັນປະຈຳ.

ແມ່ນຫຍັງຄືກົດ? ເຮົາສາມາດຮູ້ໄດ້ບໍ່ວ່າອັນໃດຖືກອັນໃດຜິດ? ທຸກສິ່ງທຸກຢ່າງໃນໂລກມັນດີໄປໝົດແລ້ວບໍ ຫລືວ່າມັນຜິດໄປໝົດແລ້ວ? ຫລືວ່າເຮົາບໍ່ສາມາດຈຳແນກໄດ້ເຖິງການກະທຳຕ່າງໆວ່າມັນຖືກຫລືມັນຜິດ?

ດົນມາແລ້ວພະເຈົ້າໄດ້ປະທານກົດແຫ່ງການມີສັງຄົມທີ່ໄຮ້ອາດຊະຍາກຳ. ແລະຄົນກໍປະຕິບັດຕາມກົດນັ້ນ ເລີຍເຮັດໃຫ້ບໍ່ມີອາດຊະຍາກຳໃດໆເກີດຂຶ້ນ! ຢູ່ຕາມບ່ອນຕ່າງໆໃນໂລກ ທຸກຄົນມີຄວາມປອດໄພແລະມີຄວາມສຸກ.

ເມື່ອລູກຫລານປະຊາຊົນອິດສະລາເອນໄດ້ຕັ້ງຄ້າຍໄກ້ພູເຂົາຊີນາອີ, ພະເຈົ້າໄດ້ລົງມາພົບພວກເຂົາແລະກ່າວວ່າ, (ອົບພະຍົບ 20:2) "ເຮົາແມ່ນພຣະຜູ້ເປັນເຈົ້າຂອງພວກເຈົ້າ ຜູ້ໄດ້ນຳພາພວກເຈົ້າອອກຈາກປະເທດເອຢິບ ຄືອອກຈາກປະເທດທີ່ພວກເຈົ້າໄດ້ຕົກເປັນທາດ"

ກ່ອນອື່ນໝົດພະເຈົ້າໄດ້ບອກກ່ຽວກັບພະອົງວ່າພະອົງເປັນຜູ້ນຳເຂົາອອກມາຈາກຄວາມເປັນທາດ. ພະອົງເປັນຜູ້ທີ່ເປີດທະເລແດງໃຫ້ເຂົາຍ່າງຂ້າມ; ພະອົງເປັນຜູ້ປົກປ້ອງເຂົາ. ຈະເວົ້າອີກທາງໜຶ່ງກໍຄືພະເຈົ້າໄດ້ກ່າວວ່າ, "ເຮົາເປັນຫ່ວງເປັນໄຍພວກເຈົ້າ ພວກເຈົ້າສາມາດໄວ້ວາງໃຈເຮົາໄດ້."

ແລ້ວພະອົງກໍບອກກົດທີບໃຫ້ພວກເຂົາເພື່ອພວກເຂົາຈະສາມາດມີຊີວິດຢ່າງສະຫງົບສຸກແລະປອດໄພ ແລະເພື່ອພວກເຂົາຈະໄດ້ຮູ້ວ່າອັນໃດຖືກອັນໃດຜິດ ໃຫ້ເຮົາມາເບິ່ງ 10 ກົດນີ້ນຳກັນ.

10 ກົດນັ້ນຄືພະບັນຍັດ 10 ປະການທີ່ພະອົງໄດ້ປະທານໃຫ້ທີ່ພູເຂົາຊີນາອີ ນັ້ນຄື
"ພວກເຈົ້າຢ່າມີພຣະອື່ນ ນອກຈາກເຮົາ
ພວກເຈົ້າຢ່າເຮັດຮູບເຄົາຣົບສຳລັບຕົນ ຢ່າຂາບໄຫວ້ຮູບເຫລົ່ານັ້ນ
ພວກເຈົ້າຢ່າໃຊ້ຊື່ພຣະຜູ້ເປັນເຈົ້າຂອງເຈົ້າ ໄປໃນທາງທີ່ຜິດ
ພວກເຈົ້າຈົ່ງນັບຖືວັນສົບ ໃຫ້ຖືເປັນວັນສັກສິດຂອງພຣະຜູ້ເປັນເຈົ້າ ຈົ່ງເຮັດວຽກທັງປວງຂອງເຈົ້າແຕ່ໃນຫົກມື້ ແຕ່ມື້ຖ້ວນເຈັດໃຫ້ຖືເປັນວັນສັກສິດຂອງພຣະຜູ້ເປັນເຈົ້າຂອງເຈົ້າ
ຈົ່ງນັບຖືບິດາມານດາຂອງເຈົ້າ
ພວກເຈົ້າຢ່າຂ້າຄົນ
ຢ່າລ່ວງເກີນຜົວເມັຽຜູ້ອື່ນ
ຢ່າລັກຊັບ
ຢ່າເປັນພຍານເທັດໃສ່ຮ້າຍເພື່ອນບ້ານຂອງຕົນ
ຢ່າອິດສາຢາກໄດ້ເຮືອນຂອງຜູ້ອື່ນ ຢ່າອິດສາຢາກໄດ້ຜົວຫລືເມັຽ ຢາກໄດ້ຂ້ອຍທາດ ຢາກໄດ້ງົວຄວາຍ ຢາກໄດ້ລໍຫລືສິ່ງອື່ນໃດທີ່ເປັນຂອງຄົນອື່ນ" (ອົບພະຍົບ 20:3-17)

ເມື່ອພະເຈົ້າບອກໃຫ້ປະຊາຊົນອິດສະລາເອນເຮັດສິ່ງໃດ ພວກເຂົາກໍເຮັດສິ່ງນັ້ນຢ່າງເຕັມທີ່ແລະເຮັດດ້ວຍຄວາມກະຕືລືລົ້ນ ແຕ່ຍ້ອນວ່າມະນຸດເປັນຄົນມັກຫລົງມັກລືມ ແລະບໍ່ມີຄວາມສາມາດຈົດຈຳທຸກຂ້ອຍຄຳທີ່ພະເຈົ້າບອກ ເພາະສະນັ້ນພະເຈົ້າຈຶ່ງຂຽນພະບັນຍັດສິບປະການທີ່ຫີນສອງແຜ່ນດ້ວຍນິ້ວພະຫັດຂອງພະອົງເອງ:

(ອົບພະຍົກ 31:18) "ເມື່ອພຣະເຈົ້າກ່າວແກ່ໂມເຊເທິງພູເຂົາຊີນາອີແລ້ວ ພຣະອົງໄດ້ປະທານແຜ່ນພຣະໂອວາດສອງແຜ່ນເປັນແຜ່ນສີລາຈາຣຶກດ້ວຍນີ້ວພຣະຫັດຂອງພຣະເຈົ້າ"

ເຖິງແມ້ວ່ານັ້ນແມ່ນເທື່ອທຳອິດທີ່ພະເຈົ້າໄດ້ຂຽນບົດບັນຍັດໃຫ້ເຂົາ ແຕ່ບັນຍັດນັ້ນໄດ້ຕັ້ງໝັ້ນຄົງຢູ່ຕະຫລອດໄປ. ກ່ອນເຫດການທີ່ພູເຂົາຊີນາອີ ແລະກໍກ່ອນອາດາມແລະເອວາຖືກສ້າງ ມາດຕະ-ຖານແຫ່ງຄວາມຖືກຕ້ອງອັນມີຢູ່ເປັນນິດແລະບໍ່ມີການປ່ຽນແປງ ໄດ້ກາຍເປັນຂໍ້ພື້ນຖານແຫ່ງການປົກຄອງຂອງພະເຈົ້າ ແທ້ທີ່ຈິງແລ້ວ ແມ້ແຕ່ທູດສະຫວັນກໍຍັງຖືພະບັນຍັດສິບປະການ ພວກເຂົາມີສິດທີ່ຈະເຮັດຕາມພະບັນຍັດຂອງພະເຈົ້າຫລືຈະເຮັດເປັນບໍ່ສົນໃຈເຮັດແລະເຮັດຜິດຕໍ່ພະບັນຍັດນັ້ນ

ຊາຕານແລະທູດບໍລິວານຂອງມັນເລືອກທີ່ຈະ "ເຮັດຕາມໃຈມັກ" ເລືອກທີ່ຈະມີກົດຂອງເຂົາເອງ. ການເຮັດກະບົດຕໍ່ພະເຈົ້າຂອງພວກເຂົາເຮັດໃຫ້ພວກເຂົາຖືກຂັບໄລ່ອອກຈາກສະຫວັນ. ພະຄຳພີໄດ້ກ່າວວ່າ (ພະນິມິດ 12:7-9) "ຂນະນັ້ນໄດ້ເກີດສົງຄາມຂຶ້ນໃນຟ້າສວັນ ມີຄາເອນກັບເທພບໍຣິວານຂອງຕົນໄດ້ສູ້ຮົບກັບພຍານາກ ພຍານາກກັບບໍຣິວານຂອງມັນກໍຕໍ່ສູ້ ແຕ່ຝ່າຍພຍານາກບໍ່ອາດຊັຍຊະນະໄດ້ ແລະພວກພຍານາກຈຶ່ງບໍ່ມີບ່ອນຢູ່ໃນສວັນຕໍ່ໄປອີກ ພຍານາກໃຫຍ່ຊຶ່ງເປັນງູແຕ່ເດີມດຳບັນທີ່ເຂົາເອີ້ນວ່າ ເດັຽໂບໂລ ແລະ ຊາຕານ ຜູ້ຫລອກລວງມະນຸດທັງໂລກ ກໍຖືກຊັດຖິ້ມລົງເສັຽ ພຍານາກກັບບໍຣິວານຂອງມັນກໍຖືກຖິ້ມລົງເທິງແຜ່ນດິນໂລກ"

ແຕ່ກໍຍັງມີທູດສະຫວັນທີ່ສັດສື່ຕໍ່ພະເຈົ້າແລະພະບັນຍັດຂອງພະອົງແລະເຮັດຕາມຄຳທີ່ພະອົງບອກ. (ເພງສັຣເສີນ 103:20) "ພວກເທວະດາອົງຍິ່ງໃຫຍ່ ອົງທີ່ປະຕິບັດຕາມຄຳສັ່ງຂອງພຣະເຈົ້າ ແລະຟັງສິ່ງທີ່ພຣະອົງຊົງກ່າວ ຈົ່ງສັຣເສີນພຣະຜູ້ເປັນເຈົ້າເທີນ"

ອາດາມແລະເອວາໄດ້ຮູ້ເຖິງກົດບັນຍັດຂອງພະເຈົ້າທີ່ສວນເອເດັນ ເພາະພວກເຂົາໄດ້ມີຄວາມຮູ້-ສຶກອາຍຫລັງຈາກທີ່ພວເຂົາໄດ້ເຮັດບາບ. ແລະເມື່ອກາອິນໃຈຮ້າຍເພາະພະເຈົ້າບໍ່ຍິນດີໃນຂອງຖະຫວາຍບູຂອງລາວແຕ່ພະອົງຍິນດີໃນຂອງຖະຫວາຍບູຊາຂອງອາເບນ, ພະອົງໄດ້ຖາມກາອິນວ່າ, (ປະຖົມມະການ 4:6,7) "ກາອິນເອີຍ ເປັນຫຍັງເຈົ້າຈຶ່ງຄຽດແຄ້ນ ແລະເຕັມໄປດ້ວຍຄວາມບໍ່ພໍໃຈ? ຖ້າເຈົ້າກະທຳດີ ເຈົ້າຄວນເງີຍຫນ້າຂຶ້ນດ້ວຍຄວາມຍິ້ມແຍ້ມ ແຕ່ດ້ວຍວ່າເຈົ້າກະທຳຊົ່ວຄວາມຊົ່ວກໍເຫມືອນດັ່ງສັດຮ້າຍທີ່ກຳລັງລໍຄອຍຖ້າຄຸບເຈົ້າ"

ກົດບັນຍັດຂອງພະເຈົ້າຕ້ອງໄດ້ຖືກນຳມາໃຊ້ ເພາະໄດ້ມີຂໍ້ຄວາມມາເຖິງເຮົາວ່າ, (ໂຣມ 4:15) "...ແຕ່ບ່ອນໃດບໍ່ມີພຣະບັນຍັດ ບ່ອນນັ້ນກໍບໍ່ມີການລ່ວງລະເມີດພຣະບັນຍັດ"

ຄຳວ່າ "ລ່ວງລະເມີດພະບັນຍັດ" ຄຳນີ້ມີຄວາມໝາຍວ່າ "ເຮັດຜິດພະບັນຍັດ" ອັບຣາຮາມຮູ້ແລະເຊື່ອຟັງບັນຍັດຂອງພະເຈົ້າກ່ອນທີ່ພະເຈົ້າໄດ້ປະທານພະບັນຍັດຂອງພະອົງທີ່ພູເຂົາຊີນາອີເສຍອີກ. ພະເຈົ້າໄດ້ຕັດວ່າພະອົງຈະອວຍພະພອນອັບຣາຮາມແລະລູກຫລານຂອງລາວ, (ປະຖົມມະການ 26:5) "ກໍເພາະວ່າ ອັບຣາຮາມໄດ້ເຊື່ອຟັງເຮົາ ໂດຍໄດ້ຮັກສາຂໍ້ຄຳສັ່ງທຸກຢ່າງຂອງເຮົາ"

ແນ່ນອນ ກ່ອນເຫດການທີ່ພູເຂົາຊີນາອີ ໂຢເຊັບໄດ້ຖືກທົດລອງໂດຍທີ່ເມຍຂອງໂພຕີຟາ ແລະໂຢເຊັບໄດ້ກ່າວອອກມາວ່າ, (ປະຖົມມະການ 39:9) "ຂ້າພະເຈົ້າມີອຳນາດໃນເຮືອນຫລັງນີ້ເທົ່າກັນກັບທ່ານ ທ່ານບໍ່ເຄີຍຫວງຫ້າມຂ້າພະເຈົ້າໃນການກະທຳໃດໆເລີຍ ເວັ້ນໄວ້ແຕ່ຍານາງທີ່ເປັນພັຣຍາຂອງທ່ານ ຂ້າພະເຈົ້າຈະກ້າກະທຳການຜິດປະເວນີແລະກະທຳສິ່ງທີ່ຊົ່ວຊ້າຢ່າງນີ້ຕໍ່ຫນ້າພຣະເຈົ້າໄດ້ຢ່າງໃດ?" ໂຢເຊບຮູ້ວ່າການລ່ວງປະເວນີແມ່ນບາບ; ແລະລາວກໍຮູ້ມາດຕະຖານແຫ່ງການຖືກຜິດຂອງພະເຈົ້າ. ລາວໄດ້ມີຄວາມໝັກແໜ້ນທີ່ຈະບໍ່ເຮັດຜິດກົດບັນຍັດອັນບໍລິສຸດຂອງພະເຈົ້າ!

ລູກຫລານປະຊາຊົນອິດສະລາເອນໄດ້ຮັບການສັ່ງສອນມາໃຫ້ເຊື່ອຟັງແລະຮັບໃຊ້ພະເຈົ້າ ແຕ່ວ່າໃນຂະນະທີ່ພວກເຂົາຕົກເປັນທາດທີ່ປະເທດເອຢິບ ພວກເຂົາກໍໄດ້ຄ່ອຍລືມກົດບັນຍັດຂອງພະເຈົ້າໄປ. ສອງສາມອາທິດກ່ອນທີ່ພວກເຂົາຈະເດີນທາງໄປຮອດພູເຂົາຊີນາອີ ພະເຈົ້າໄດ້ຕຳນິໂມເຊເພາະປະຊາຊົນອິດສະລາເອນບໍ່ເຊື່ອຟັງພະບັນຍັດຂອງພະອົງໂດຍການທີ່ພວກເຂົາພະຍາຍາມເກັບມານາໃນວັນສະບາໂຕ.

(ອົບພະຍົບ 16:28,30) "ພຣະຜູ້ເປັນເຈົ້າຈຶ່ງຊົງກ່າວຕໍ່ໂມເຊວ່າ, 'ພວກເຈົ້າຈະຂັດຂືນຂໍ້ບັນຍັດແລະກົດຫມາຍຂອງເຮົາຢູ່ເຫິງປານໃດ? ຈົ່ງຈຳໄວ້ວ່າ ເຮົາຄືພຣະຜູ້ເປັນເຈົ້າໄດ້ໃຫ້ວັນສິນແກ່ພວກເຈົ້າ' ດ້ວຍເຫດນີ້ ຄົນທັງປວງຈຶ່ງບໍ່ເຮັດວຽກໃນວັນຖ້ວນເຈັດ (ວັນສະບາໂຕ)"

ພີ່ນ້ອງເຫັນຫລືບໍ່ວ່າພະບັນຍັດຂໍ້ທີສີ່ໄດ້ມີກ່ອນເຫດການທີ່ພູເຂົາຊີນາອີແລ້ວ. ກົດບັນຍັດຂອງພະເຈົ້າແມ່ນເປັນບົດມາດຕະຖານອັນຖືກຕ້ອງເປັນນິດສຳລັບຈັກກະວານ. ແລ້ວພວກເຮົາຈະຕົກໃຈເຮັດຫຍັງເມື່ອພວກເຮົາໄດ້ຮູ້ວ່າພະເຈົ້າມີບັນຍັດໃນການຄວບຄຸມຈັກກະວານຂອງພະອົງ?

ອັກຄະສາວົກໂປໂລໄດ້ຂຽນວ່າ: (1 ໂກຣິນໂທ 14:33,40) "ເພາະວ່າພຣະເຈົ້າບໍ່ໃຊ່ເປັນຜູ້ກໍ່ເຫດວຸ້ນວາຍ ຈົ່ງປະຕິບັດທຸກສິ່ງໃຫ້ຖືກຕ້ອງຕາມລະບຽບວິນັຍ"

ໂດຍປາດສະຈາກລະບຽບກົດໝາຍບໍ່ມີລັດຖະບານໃດທີ່ຈະບໍລິຫານປະຫານໃຫ້ມີຄວາມສະຫງົບສຸກ ແລະກໍບໍ່ມີສັງຄົມໃດທີ່ຈະຢູ່ກັນດ້ວຍຄວາມປອງດອງ, ດ້ວຍຄວາມສຸກ, ດ້ວຍຄວາມປອດໄພ ທຳມະຊາດກໍຍັງມີກົດ; ເມື່ອເວລາລູກຂອງຫລາຍໆຄົນຂໍຫລິ້ເກມ ພໍ່ແມ່ກໍຍັງຕັ້ງກົດຫລິ້ນເກມໃຫ້ກັບລູກເຊັ່ນວ່າ ລູກຈະຫລິ້ນເກມໄດ້ກໍຕໍ່ເມື່ອເຮັດວຽກບ້ານແລ້ວ.

ພະຄຳພີໄດ້ກ່າວວ່າ, (ໂຣມ 2 :13) “ດ້ວຍວ່າບໍ່ແມ່ນພວກຄົນທີ່ຟັງພຣະບັນຍັດຈະເປັນຜູ້ຊອບທັມຕໍ່ພຣະພັກພຣະເຈົ້າ ແຕ່ແມ່ນຜູ້ທີ່ໄດ້ຂັບຕາມພຣະບັນຍັດເທົ່ານັ້ນທີ່ຈະໄດ້ຊົງຖືວ່າຊອບທັມ” ການຮູ້ຈັກພະບັນຍັດຂອງພະເຈົ້າກໍແມ່ນເລື່ອງສຳຄັນແຕ່ສຳຄັນກວ່ານັ້ນກໍແມ່ນການເຮັດຕາມພະບັນຍັດນັ້ນ.

ພະເຍຊູໄດ້ກ່າວວ່າ, (ໂຢຮັນ 14 :15) “ຖ້າທ່ານທັງຫລາຍຮັກເຮົາ ທ່ານກໍຈະຖືຮັກສາຂໍ້ບັນຍັດຂອງເຮົາ” ຄວາມຈິງແລ້ວ ພະເຍຊູໄດ້ໝາຍຄວາມວ່າຄວາມຮັກແມ່ນພື້ນຖານຂອງການປະຕິບັດຕາມພະບັນຍັດທຸກຂໍ້ຂອງພະເຈົ້າ.

(ມັດທາຍ 22 :37,38) “ຈົ່ງຮັກອົງພຣະຜູ້ເປັນເຈົ້າຂອງເຈົ້າດ້ວຍສຸດໃຈ ດ້ວຍສຸດຈິດ ແລະດ້ວຍສຸດຄວາມຄຶດຂອງເຈົ້າ ນັ້ນແຫລະ, ເປັນພຣະບັນຍັດຂໍ້ໃຫຍ່ແລະຂໍ້ຕົ້ນ” ມັດທາຍ 22 :37,38

ຈາກນັ້ນພະເຍຊູໄດ້ກ່າວວ່າ, (ມັດທາຍ 22:39-40) “ຂໍ້ທີ່ສອງກໍເຫມືອນກັນຄື ຈົ່ງຮັກເພື່ອນບ້ານເຫມືອນຮັກຕົນເອງ ພຣະບັນຍັດແລະຖ້ອຍຄຳຂອງຜູ້ປະກາດພຣະທັມທັງຫມົດ ກໍຂຶ້ນຢູ່ກັບພຣະບັນຍັດສອງຂໍ້ນີ້”

ຖ້າເຮົາຮັກພະເຈົ້າດ້ວຍສຸດຈິດສຸດໃຈສຸດຄວາມຄວາມຄິດຂອງເຮົາແທ້ ພວກເຮົາກໍຈະສະແດງຄວາມຮັກນີ້ອອກມາໂດຍການຮັກສາສີ່ຂໍ້ທຳອິດຂອງພະບັນຍັດ

ຮັກພະເຈົ້າໝາຍຄວາມວ່າ: ພະເຈົ້າເປັນໜຶ່ງໃນຊີວິດ ພວກເຮົານະມັດສະການພຽງແຕ່ພະອົງ. ພວກເຮົາຄຳລົບຢຳເກງນາມບໍລິສຸດຂອງພະອົງ ພວກເຮົາເອົາຈິງເອົາຈັງກັບນັດໝາຍມາພົບພະອົງໃນວັນສະບາໂຕ ຖ້າເຮົາຮັກເພື່ອນມະນຸດເໝືອນກັບຮັກໂຕເຮົາເອງເຮົາກໍຈະຮັກແລະໃຫ້ກຽດພໍ່ແມ່ເບິ່ງເຫັນຄຸນຄ່າຂອງຊີວິດ ຄົງໄວ້ເຊິ່ງສິນລະທຳ ບໍ່ກ້າວກ່າຍຊັບສິນຂອງຄົນອື່ນ ສື່ສັດໃນຄວາມສຳພັນຂອງກັນແລະກັນ

ບໍ່ຢາກໄດ້ຂອງທີ່ເປັນຂອງຄົນອື່ນ. ເຂົາໄດ້ຄຳນວນອອກມາວ່າ ມີກົດໝາຍຫລາຍກວ່າ 35 ລ້ານຂໍ້ຖືກຂຽນຂຶ້ນມາເພື່ອມາຄວບຄຸມການກະທຳຂອງມະນຸດ ແຕ່ບັນຍັດຂອງພະເຈົ້າພຽງແຕ່ 10 ປະການເທົ່ານັ້ນກໍສາມາດກວມລວມເອົາທຸກກິດການປະພຶດຂອງມະນຸດ. ພະອົງຊ່າງເປັນພະເຈົ້າທີ່ຍິ່ງໃຫຍ່ແທ້ ແຕ່ທີ່ສຳຄັນຫລາຍກວ່ານັ້ນ ອັນເຊິ່ງບໍ່ຄ້າຍຄືກົດໝາຍຂອງມະນຸດທີ່ຍັງມີຂໍ້ຂາດຕົກບົກພ່ອງຫລືມີຊ່ອງວ່າງ

(ເພງສັຣເສີນ 19:7,11) “ພຣະທັມຂອງພຣະຜູ້ເປັນເຈົ້ານັ້ນຖືກຕ້ອງ(ສົມບູນ) ຂ້າພຣະອົງໄດ້ຮັບຮາງວັນຍ້ອນການເຊື່ອຟັງພຣະທັມນັ້ນ”

ນັກຮຽນພະຄຳພີຄົນໜຶ່ງຊື່ ອໍກັດສ໌ ສຕຣອງ (Ausgust Strong) ໄດ້ຂຽນວ່າ: “ກົດບັນຍັດແມ່ນແມ່ນສຳເນົາຂອງລັກສະນະຂອງພະເຈົ້າ.”

ປະຈຸບັນນີ້ເຮົາເວົ້າກັນວ່າ “ພະບັນຍັດສິບປະການແມ່ນປະຫວັດຂອງພະລັກສະນະຂອງພະເຈົ້າ ແລະລັກສະນະຂອງພະອົງກໍບໍ່ມີວັນປ່ຽນແປງ”! ຖ້າຫາກມີການປ່ຽນແປງໃດໆແກ່ບັນຍັດຂອງພະເຈົ້າມັນກໍຈະເຮັດໃຫ້ບັນຍັດນັ້ນສົມບູນນ້ອຍລົງ.ກົດບັນຍັດທີ່ສົມບູນຢູ່ແລ້ວບໍ່ຈຳເປັນທີ່ຈະຕ້ອງມີການປ່ຽນແປງ. ນີ້ຄືຄວາມຈິງທີ່ພະເຍຊູກ່າວ (ລູກາ 16:17) “ຟ້າແລະດິນຈະລ່ວງໄປ ກໍງ່າຍກວ່າທີ່ພຣະບັນຍັດແຕ່ຈຸດດຽວຈະເປັນໂມຄະ”

ແຕ່ພີ່ນ້ອງອາດຈະກ່າວວ່າ, “ຂ້າພະເຈົ້າຮູ້ສຶກວ່າພະບັນຍັດສິບປະການເຮັດໃຫ້ຂ້ອຍມີຂໍ້ຈຳກັດຫລາຍເຫລືອເກີນ ພະບັນຍັດນັ້ນປຽບສະເໝືອນຮົ້ວກັ້ນຂ້າພະອົງ.” ພະເຈົ້າບໍເຄີຍປະສົງຈະໃຫ້ບັນຍັດຂອງພະອົງເປັນປັນຫາຕ່າງໆແລະວາງຂໍ້ຈຳກັດໃຫ້ກັບມະນຸດ. ໃນທາງກົງກັນຂ້າມ, ພະເຈົ້າປະທານບັນຍັດໃຫ້ເພື່ອເປັນເກາະປ້ອງກັນຄວາມໂສກເສົ້າແລະຄວາມບໍ່ດີຕ່າງໆ. ພະອົງປະສົງໃຫ້ບັນຍັດຂອງພະອົງເປັນຫລັກປະກັນໃຫ້ທຸກຄົນໃນທຸກບ່ອນທຸກທີ່ມີອິດສະຫລະພາບແລະຄວາມປອດໄພ, ພະເຈົ້າໄດ້ກ່າວວ່າ, (ພະບັນຍັດທີສອງ 5:29) “ຢາກໃຫ້ມີຈິດໃຈເຊັ່ນນີ້ຢູ່ສເມີໄປ ຄືທີ່ຈະຢຳເກງເຮົາ ແລະຮັກສາບັນຍັດທັງຫມົດຂອງເຮົາ ເຂົາທັງຫລາຍກໍຈະສຸກຈະເຣີນຢູ່ຕລອດຊົ່ວລູກຫລານຂອງເຂົາເປັນນິດ” ເໝືອນກັບຮົ້ວຕາມຂົວຕາມທະໜົນທີ່ປ້ອງກັນຄົນຕົກອອກຈາກທາງ, ພະເຈົ້າປະທານບັນຍັດເພື່ອປ້ອງກັນເຮົາບໍ່ໃຫ້ຕົກຈາກຫົນທາງແຫ່ງຊີວິດ. ແຕ່ວ່າກໍຍັງມີເຫດຜົນອື່ນຄືກັນທີ່ພະເຈົ້າປະທານບັນຍັດໃຫ້ມະນຸດ

(ໂຣມ 3:20) “ເພາະວ່າພຣະບັນຍັດໄດ້ເຮັດໃຫ້ສັງເກດຮູ້ຈັກຄວາມບາບ;”

ໂປໂລກໍໄດ້ເວົ້າຄືກັນວ່າ, (ໂຣມ 7:7) “ແຕ່ຖ້າພຣະບັນຍັດບໍ່ໄດ້ບົ່ງໄວ້ ເຮົາກໍຄົງບໍ່ໄດ້ຮູ້ວ່າອັນໃດເປັນຄວາມຜິດບາບ ເພາະວ່າຖ້າພຣະບັນຍັດບໍ່ໄດ້ຫ້າມວ່າ, ‘ຢ່າໂລບ’ ເຮົາກໍຄົງບໍ່ຮູ້ວ່າຄວາມໂລບນັ້ນຄືອັນໃດ”

ດຣ. ອໍເທີ ເບດສ໌ (Dr. Arthur Bietz) ໄດ້ເວົ້າວ່າ ຢູ່ອາຟຣິກາໄດ້ມີລາຊະນີອົງໜຶ່ງພະນາງເຊື່ອໃນຄໍາເວົ້າຂອງປະຊາຊົນທັງຫລາຍທີ່ເວົ້າວ່າບໍ່ມີໃຜສວຍງາມກວ່າພະນາງ. ມື້ໜຶ່ງໄດ້ມີຄົນມາຂາຍກະຈົກໃນເມືອງນັ້ນ ລາຊະນີໄດ້ຊື້ກະຈົກ ເມື່ອພະນາງເບິ່ງກະຈົກພະນາງຕົກໃຈໃນຮູບພາບທີ່ເຫັນໃນກະຈົກຈົນໄດ້ທຸບກະຈົກແຕກເປັນຊິ້ນໆ!

ບັດຍັດຂອງພະເຈົ້າກໍຄ້າຍໆຄືກັບກະຈົກ, ເມື່ອເຮົາສຶກສາບັນຍັດພະອົງ ມັນກໍຄ້າຍຄືດັ່ງລາຊະນີອາຟຣິກາເບິ່ງກະຈົກ ແລະເຮົາກໍອາດຮູ້ວ່າການກະທໍາຂອງເຮົາແມ່ນເປັນການກະທໍາທີ່ບໍ່ຄ່ອຍດີເລີຍ ແຕ່ວ່າການທໍາລາຍແລະເຮັດເປັນບໍ່ສົນໃຈບັນຍັດຂອງພະອົງ ບໍ່ໄດ້ເຮັດໃຫ້ເຮົາດີຂຶ້ນແຕ່ຢ່າງໃດ. ບັນຍັດບອກໃຫ້ຮູ້ເຖິງບາບທີ່ເຮົາມີ! ຖ້າເຮົາເຮັດຕາມບັນຍັດຂອງພະອົງ ບັນຍັດນັ້ນປຽບເໝືອໄກ້ນໍາທາງທີ່ຊ່ອຍໃຫ້ເຮົາພົບຄວາມສຸກມີຊີວິດທີ່ປາດສະຈາກຜິດບາບ. ບັນຍັດນັ້ນບໍ່ໄດ້ເຮັດໃຫ້ເຮົາພະລັງທີ່ຈະເອົາຊະນະຄວາມບາບແລະລົບລ້າງຄວາມບາບໄດ້. ບໍ່ວ່າເຮົາຈະເຮັດດີຫລາຍປານໃດ ເຮົາກໍບໍ່ສາມາດລ້າງບາບທີ່ເຮົາເຮັດໃນອະດີດໄດ້. ແລ້ວເຮົາຈະໄດ້ຮັບການໃຫ້ອະໄພແນວໃດ? ແລ້ວເຮົາຈະພົ້ນຈາກໂທດແຫ່ງຄວາມບາບອັນແມ່ນຄວາມຕາຍໄດ້ແນວໃດ? ທີ່ປະຕູສວນເອເດັນ ພະເຈົ້າພະເຈົ້າໄດ້ໃຫ້ສິ່ງຢໍ້າເຕືອນວ່າການບໍ່ເຊື່ອຟັງໄດ້ນໍາມາເຊິ່ງຄວາມຕາຍມາສູ່ຄົນທີ່ບໍເຊື່ອຟັງຖ້າບໍ່ດັ່ງນັ້ນກໍແມ່ນມາສູ່ຕົວແທນຜູ້ບໍລິສຸດ. ການຖະຫວາຍບູຊາແກະແມ່ນເຮັດເພື່ອສະແດງໃຫ້ເຫັນເຖິງຄວາມເຊື່ອສັດທາດໃນການຊ່ອຍຄົນບາບໃຫ້ລອດຂອງພະເຈົ້າ. ນີ້ແມ່ນແຜ່ນການຂອງພະເຈົ້າທີ່ຊ່ອຍໃຫ້ອາດາມເຂົ້າໃຈວ່າບຸດຜູ້ບໍລິສຸດຂອງພະເຈົ້າຈໍາເປັນຕ້ອງຕາຍເພື່ອລົບລ້າງການເຮັດຜິດບັດຍັດຂອງພະເຈົ້າ.

ພະຄຣິດຜູ້ເປັນລູກແກະຂອງພະເຈົ້າຈະຕ້ອງໄດ້ຮັບໂທດແທນມະນຸດແລະທົນທຸກທໍລະມານແທນພວກເຂົາ. ກົດບັນຍັດບໍ່ສາມາດໄຖ່ບາບຂອງມະນຸດໄດ້

ອັກຄະສາວົກໂປໂລໄດ້ກ່າວວ່າ, (ຄາລາເຕຍ 3:21) “...ເພາະວ່າຖ້າຊົງປະທານພຣະບັນຍັດອັນອາດໃຫ້ມີຊີວິດຢູ່ໄດ້ ການຊົງຖືວ່າເປັນຄົນຊອບທັມຄົງຈະໄດ້ມີຢູ່ໂດຍພຣະບັນຍັດນັ້ນແທ້”

ບໍ່ແມ່ນບັນຍັດທີ່ນຳການອະໄພມາສູ່ມະນຸດແຕ່ແມ່ນພະຄຸນພະເຈົ້າ! ໂດຍການຖະຫວາຍບູຊາຂອງພະຄຣິດເທົ່ານັ້ນທີ່ສາມາດເຮັດໃຫ້ມະນຸດມີຊີວິດນິລັນ.

ພະຄຳພີໄດ້ກ່າວວ່າ, (ໂຣມ 6:23) "ດ້ວຍວ່າຄ່າຈ້າງຂອງຄວາມຜິດບາບກໍຄືຄວາມຕາຍ ແຕ່ຂອງພຣະຣາຊທານອັນໂຜດມາແຕ່ພຣະເຈົ້າ ກໍຄືຊີວິດອັນຕລອດໄປເປັນນິດໃນພຣະຄຣິດ ຄືພຣະເຢຊູເຈົ້າຂອງພວກເຮົາ"

ຄວາມລອດນັ້ນບໍ່ແມ່ນໄດ້ມາໂດຍການຮັກສາບັດຍັນ: (ເອເຟໂຊ 2:8,9) "ດ້ວຍວ່າຊຶ່ງທ່ານທັງ-ຫລາຍໄດ້ຖືກຊົງໂຜດໃຫ້ພົ້ນນັ້ນ ກໍຍ້ອນພຣະຄຸນດ້ວຍທາງຄວາມເຊື່ອ ສິ່ງເຫລົ່ານີ້ບໍ່ໃຊ່ພວກທ່ານເຮັດເອົາເອງ ແຕ່ພຣະເຈົ້າຊົງປະທານໃຫ້ ຄວາມພົ້ນນັ້ນບໍ່ໃຊ່ມີມາຍ້ອນການປະຕິບັດ ເພື່ອບໍ່ໃຫ້ຄົນນຶ່ງຄົນໃດອວດໄດ້"

ບາງຄົນອາດເວົ້າວ່າ: "ຖ້າເຮົາພົ້ນໄດ້ໂດຍພະຄຸນພະເຈົ້າ ກໍເທົ່າກັບເຮົາເປັນອິດສະຫລະຢາກເຮັດສິ່ງໃດກໍໄດ້ແລະບໍ່ຈຳເປັນຕ້ອງເຊື່ອຟັງ" ນີ້ແມ່ນຄວາມຄິດທີ່ຜິດແລ້ວພີ່ນ້ອງ

ໂປໂລໄດ້ຂຽນວ່າ: (ໂຣມ 6:1,2) "ຖ້າຢ່າງນັ້ນແລ້ວພວກເຮົາຈະວ່າຢ່າງໃດ ຄວນທີ່ເຮົາທັງຫລາຍຈະຢູ່ໃນຄວາມຜິດບາບຕໍ່ໄປ ເພື່ອໃຫ້ພຣະຄຸນມີຫລາຍຂຶ້ນຫລື ບໍ່ເປັນຢ່າງນັ້ນດອກ ພວກເຮົາຜູ້ຕາຍຕໍ່ຄວາມຜິດບາບແລ້ວ ຈະດຳເນີນຊີວິດໃນຄວາມຜິດບາບຕໍ່ໄປໄດ້ຢ່າງໃດ"

ຄວາມລອດແມ່ນມີໃຫ້ຄົນທີ່ຢາກຈະລອດແລະຢາກຈະມີສ່ວນໃນອານາຈັກຂອງພະເຈົ້າ. ຖ້າຫາກວ່ານັກໂທດປະຫານຊີວິດໄດ້ຮັບການໃຫ້ອະໄພແລະປ່ອຍອອກຈາກຄຸກໃຫ້ເປັນອິດສະຫລະ ອັນນີ້ມີຄວາມໝາຍບໍ່ວ່າລາວເປັນອິດສະຫລະໃຊ້ເຮັດຜິດກົດໝາຍແນວໃດກໍໄດ້? ບໍ່ແມ່ນ! ເພາະວ່າລາວໄດ້ຮັບການໃຫ້ອະໄພ ລາວຄວນຮູ້ສຶກວ່າລາວຄວນຮັກສາກົດໝາຍໃຫ້ເຄັ່ງຄັດກວ່າເກົ່າ. ສຳ-ຄັນກວ່ານັ້ນ ບັນຍັດຂອງພະເຈົ້າບອກໃຫ້ເຮົາເຖິງບາບທີ່ເຮົາມີແລະຊ່ອຍໃຫ້ເຮົາຮູ້ສຶກວ່າເຮົາຕ້ອງ-ການພະຜູ້ຊ່ອຍໃຫ້ລອດ. ເມື່ອເຮົາຍອມຮັບພະຄຣິດໃຫ້ເປັນພະຜູ້ຊ່ອຍໃຫ້ລອດແລະເປັນພະເຈົ້າຂອງເຮົາ, ພະອົງໄດ້ມອບການໃຫ້ອະໄພແກ່ເຮົາແລະມອບພະລັງທີ່ຈະຮັກສາບັນຍັດຂອງພະອົງໃຫ້ເຮົາ, ເພາະພະອົງໄດ້ສັນຍາວ່າ: "...ເຮົາຈະບັນຈຸຂໍ້ບັນຍັດຂອງເຮົາໄວ້ໃນໃຈຂອງເຂົາ ເຮົາຈະຈາຣຶກຂໍ້ບັນຍັດນັ້ນໄວ້ໃນຫົວໃຈຂອງເຂົາ" ເຮັບເຣີ 8:10

ມັນແມ່ນເລື່ອງງ່າຍທີ່ເຮົາຈະເຮັດສິ່ງທີ່ເຮົາມັກ ແລະນັ້ນກໍແມ່ນສິ່ງທີ່ພະເຈົ້າໄດ້ສັນຍາໄວ້ກັບຄົນທີ່ຕິດຕາມພະອົງ ພະອົງຈະຂຽນບັນຍັດພະອົງໄວ້ທີ່ໃຈເຂົາ ແລະພວກເຂົາກໍຈະຮັກບັນຍັດນັ້ນ ນີ້ເປັນທາງດຽວທີ່ມະນຸດຈະສາມາດເຊື່ອຟັງແລະຕິດຕາມພະເຈົ້າ ຍ້ອນຄວາມຮັກທີ່ພະຄຣິດມີຕໍ່ພະບິດາ ພະຄຣິດຈຶ່ງສາມາດຮັກສາພະບັນຍັດ, ພະອົງໄດ້ກ່າວວ່າ, (ໂຢຮັນ 15:10) "...ເຮົາໄດ້ຖືຮັກສາບັນຍັດພຣະບິດາຂອງເຮົາ ເຮົາຈຶ່ງຕັ້ງຢູ່ໃນຄວາມຮັກຂອງພຣະອົງ"

ແລະພະເຍຊູກໍາລັງຖາມພວກເຮົາໃຫ້ສະແດງຄວາມຮັກຂອງເຮົາຕໍ່ພະອົງໂດຍການຮັກສາບັນຍັດຂອງພະອົງ: (ໂຢຮັນ 14:15) "ຖ້າທ່ານທັງຫລາຍຮັກເຮົາ ທ່ານກໍຈະຖືຮັກສາຂໍ້ບັນຍັດຂອງເຮົາ"

ເລື່ອງທີ່ດີທີ່ສຸດທີ່ສະແດງໃຫ້ເຫັນເຖິງຄວາມຮັກແລະການເຊື່ອຟັງນໍ້າພະໄທຂອງພະເຈົ້າເຊິ່ງໄດ້ເກີດໃນຄືນທີ່ອັນເໜັດໜາວຢູ່ກ້ອງຕົ້ນໝາກກອກເທດຢູ່ໃນສວນແຫ່ງໜຶ່ງ

ເລືອດໄດ້ໄຫລຜ່ານໃບໜ້າຂອງບຸດຂອງພະເຈົ້າແລະພະອົງໄດ້ອະທິຖານວ່າ, (ມັດທາຍ 26:39) "...ໂອ ບິດາເອີຍ, ຖ້າເປັນໄປໄດ້ຂໍໃຫ້ຈອກນີ້ເລື່ອນພົ້ນໄປຈາກລູກທ້ອນ ແຕ່ຢ່າງໃດກໍດີ, ຂໍຢ່າໃຫ້ເປັນໄປຕາມໃຈປາຖນາຂອງລູກ ແຕ່ໃຫ້ເປັນໄປຕາມພຣະທັຍຂອງພຣະອົງເທີ້ນ"

ຊະຕາກໍາຂອງມະນຸດແມ່ນຢູ່ລະຫວ່າງກາງຂອງສອງເຫດການນັ້ນຄືໂລກອັນຊົ່ວຮ້າຍນີ້ຈະລອດຫລືຈະຖືກທໍາລາຍ. ແລ້ວຊາຍກາລີເລຄົນນີ້ກໍໄດ້ພ້ອມທີ່ຈະເສຍສະຫລະຊີວິດແລະຕາຍທີ່ຄາວາຣີ

ພະອົງສາມາດກ່າວອອກມາວ່າ, "ປ່ອຍໃຫ້ຄົນບາບໄດ້ຮັບຄວາມທຸກທໍລະມານແລະຜົນຂອງຄວາມບາບທີ່ເຂົາໄດ້ເຮັດ" ຖ້າພະອົງຈະເຮັດແນວນັ້ນພະອົງກໍສາມາດເຮັດໄດ້ ແຕ່ພະອົງໄດ້ປ່ອຍໃຫ້ມະ-ນຸດຜູ້ບາບໜາຕອກຕະປູໃສ່ມືພະອົງແລະຕຶງພະອົງທີ່ໄມ້ກາງແຂນເພື່ອວ່າບາບຂອງເຂົາຈະໄດ້ຮັບການໃຫ້ອະໄພ

ໃນເວລາໜ້າສິ່ວໜ້າຂວັນ ພະເຍຊູໄດ້ຈັບເອົາປາກກາແລ້ວຈຸ່ມລົງໄປໃນນໍ້າມຶກເຊິ່ງແມ່ນໂລຫິດຂອງພະອົງແລ້ວຂຽນວ່າ "ເຈົ້າໄດ້ຮັບການໃຫ້ອະໄພແລ້ວ" ທີ່ສະມຸດບັນທຶກຊີວິດຂອງພີ່ນ້ອງແລະຂ້າພະເຈົ້າ! ໄມ້ກາງແຂນເກົ່າທີ່ໂນນເຂົາຄາວາຣີໄດ້ເປັນສິ່ງຢໍ້າເຕືອນເຖິງການທີ່ພະເຈົ້າໄດ້ໃຊ້ຄ່າຄວາມຜິດບາບຂອງຄົນທັງຫລາຍທີ່ເຮັດຜິດຕໍ່ພະບັນຍັດ.

ຖ້າບັນຍັດຂອງພະເຈົ້າສາມາດປ່ຽນແປງຫລືລົບລ້າງໄດ້, ນັ້ນກໍບໍ່ຈຳເປັນທີ່ພະຄຣິດຈະຕ້ອງລົງມາຕາຍ. ແຕ່ວ່າພະເຈົ້າບໍ່ສາມາດເພີກເສີຍຕໍ່ຄວາມຜິດບາບຂອງມະນຸດ, ພະອົງບໍ່ສາມາດປ່ຽນແປງບັນຍັດຂອງພະອົງ ເພາະສະນັ້ນມະນຸດຜູ້ເປັນຄົນບາບຕ້ອງການພະຜູ້ຊ່ອຍໃຫ້ລອດ.
ຂອບຄຸນພະເຈົ້າສຳລັບຄວາມຮັກພະອົງທີ່ໄດ້ປະທານພະບຸດອົງດຽວຂອງພະອົງມາເປັນມາຕາຍແທນເຮົາທັງຫລາຍ

(ໂຢຮັນ 3:16) "ເພາະວ່າພຣະເຈົ້າຊົງຮັກໂລກຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງ ເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍ ແຕ່ມີຊີວິດອັນຕລອດໄປເປັນນິດ"

ໜັງສືພະນິດມິດໄດ້ອະທິບາຍເຖິງຄົນທີ່ພ້ອມຈະພົບພະເຍຊູເມື່ອພະອົງສະເດັດກັບມາຄັ້ງທີສອງແລະພ້ອມທີ່ຈະເຂົ້າສູ່ເມືອງສະຫວັນແລະມີຊີວິດອັນຕະຫລອດໄປເປັນນິດ.

ພະເຈົ້າໄດ້ອະທິບາຍກ່ຽວກັບເຂົາວ່າ: (ພະນິມິດ 14:12) "ໃນເຣື່ອງນີ້ພວກໄພ່ພົນຂອງພຣະເຈົ້າຄືຜູ້ທີ່ຖືຮັກສາຂໍ້ບັນຍັດຂອງພຣະເຈົ້າ ແລະຄວາມເຊື່ອຝ່າຍພຣະເຢຊູ ກໍຕ້ອງໃຊ້ຄວາມພຽນອົດ-ທົນ"

ໃນຂໍ້ທີ 14 ພະເຈົ້າໄດ້ກ່າວວ່າ, (ພະນິມິດ 14:14) "ຂ້າພະເຈົ້າໄດ້ເບິ່ງ ແລະດັ່ງນີ້ ມີເມກຂາວແລະມີຜູ້ນຶ່ງປະທັບເທິງເມກນັ້ນເຫມືອນກັບບຸດມະນຸດ ພຣະສຽນສວມພວງມາລັຍຄຳ ແລະພຣະຫັດຊົງຖືກ່ຽວດວງຄົມ" ນີ້ແມ່ນຄຳບັນລະຍາຍເຖິງການສະເດັດລົງມາເກັບກ່ຽວ. ແລະນີ້ກໍແມ່ນຈຸດຈົບຂອງທຸກໆສິ່ງ.

ໃນຄຳພະຍາກອນທີ່ພະເຍຊູໄດ້ໃຫ້ແກ່ໂຢຮັນໃນໜັງສືພະນິມິດກ່ຽວກັບປະຫວັດສາດຂອງຄຣິສຕະຈັກ, ພະອົງໄດ້ກ່າວວ່າຄຣິສຕະຈັກຂອງພະເຈົ້າທີ່ແທ້ຈິງທີ່ເຫລືອຢູ່ນັ້ນໄດ້ຖືກອະທິບາຍດັ່ງນີ້

(ພະນິມິດ 12:17) "ຝ່າຍພຍານາກກໍຄຽດແຄ້ນຍິງນັ້ນ ຈຶ່ງອອກໄປສູ້ຮົບກັບເຊື້ອສາຍຂອງຍິງນັ້ນທີ່ເຫລືອຢູ່ ຄືພວກທີ່ຖືຮັກສາຂໍ້ບັນຍັດຂອງພຣະເຈົ້າ ແລະທີ່ຍຶດຖືຄຳພຍານຝ່າຍພຣະເຢຊູ..."

ໜັງສືພະນິມິດໄດ້ອະທິບາຍໃຫ້ເຮົາຮູ້ເຖິງຄົນທີ່ຈະໄດ້ເຂົ້າໃນແຜ່ນດິນຂອງພະອົງ! ປະຊາຊົນຂອງພະເຈົ້າຮັກພະຜູ້ສ້າງແລະພະຜູ້ໄຖ່ຫລາຍຈົນທີ່ພວກເຂົາພ້ອມທີ່ຈະເຮັດຫຍັງກໍໄດ້ຂໍພຽງແຕ່ພະອົງ

ບອກເຂົາ. ພວກເຂົາຢາກຈະສະແດງຄວາມຮັກຂອງພວກເຂົາທີ່ມີຕໍ່ພະອົງໂດຍການເຮັດຕາມນໍ້າພະໄທຂອງພະອົງ.

ພວກເຂົາຮູ້ວ່ານໍ້າພະໄທຂອງພະເຈົ້າແມ່ນຢູ່ໃນພະບັນຍັດຂອງພະອົງ. ພວກເຂົາເຊື່ອຟັງຜູ້ທີ່ໄດ້ກະທໍາແລະເສັຍສະຫລະເພື່ອຊ່ອຍເຂົາຈາກບາບ. ພະເຍຊູໄດ້ເປີດອ້ອມແຂນອອກແລະກ່າວວ່າ, "ມາ" ດຽວນີ້ພະອົງກໍກໍາລັງຮ້ອງເຮົາຄືກັນ! ພະອົງຢາກປະທານພະລັງທີ່ຈະມີຊີວິດເພື່ອພະອົງໃຫ້ເຮົາ. ພະອົງປາດຖະໜາຈະລ້າງບາບຂອງເຮົາ.

ພະອົງກໍາລັງຮ້ອງຮຽກເຮົາວ່າ (ພະນິມິດ 22:17) "ເຊີນມາ ໃຫ້ຜູ້ຫິວນໍ້າເຂົ້າມາ ຜູ້ໃດມີໃຈປາຖນາກໍໃຫ້ຜູ້ນັ້ນມາຮັບນໍ້າສໍາລັບຊີວິດໂດຍບໍ່ຕ້ອງເສັຽຄ່າ"

ພີ່ນ້ອງທີ່ຮັກ, ຄວາມລອດເປັນຂອງພີ່ນ້ອງແລ້ວມື້ນີ້ ພະອົງສິ້ນພະຊົນເພື່ອເຮົາ ພະອົງຢາກມອບຊີວິດນິລັນໃຫ້ພີ່ນ້ອງ. ຢ່າປ່ອຍໃຫ້ຄວາມສະໜຸກສະໜານແລະຄວາມວິຕົກຕ່າງໆໃນໂລກນີ້ຂັ້ນພີ່ນ້ອງຈາກຊີວິດນິລັນ.

ຢ່າປ່ອຍໃຫ້ສິ່ງໃດສິ່ງໜຶ່ງດຶງພີ່ນ້ອງກັບຄືນ. ພະອົງກໍາລັງຮ້ອງຮຽກພີ່ນ້ອງ: "ຈົ່ງກັບມາເຮືອນ!" ພະເຍຊູຜູ້ນີ້ຢາກປ່ຽນແປງຊີວິດພີ່ນ້ອງ. ພະອົງຢາກມອບພະຄຸນແລະພະລັງໃນການຮັກສາບັນຍັດຂອງພະອົງໃຫ້ພີ່ນ້ອງ. ພີ່ນ້ອງອາດຈະຮູ້ສຶກອ່ອນເພຍ ແຕ່ພະເຍຊູແຂງແຮງ. ບໍ່ວ່າພີ່ນ້ອງໄດ້ເຮັດຫຍັງໃນອະດີດກໍຕາມ ພະເຍຊູຈະໃຫ້ອະໄພແລະຊໍາລະພີ່ນ້ອງໃຫ້ບໍລິສຸດ ພະອົງຈະມອບກໍາລັງໃຫ້ພີ່ນ້ອງໄດ້ມີຊີວິດໃໝ່ ຢ່າປ່ອຍໃຫ້ສິ່ງໃດດຶງພີ່ນ້ອງກັບຄືນ. ຂໍໃຫ້ພີ່ນ້ອງອະທິຖານກັບຂ້າພະເຈົ້າວ່າ, "ພະເຍຊູ, ຂ້າພະອົງກໍາລັງມາຫາພະອົງ ຂ້າພະອົງກໍາລັງມາຫາພະອົງດຽວນີ້."